ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 05 ຫາ 09 ມິຖຸນາ 2023




ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ຟາມປາວຽງພູຄາ ມີລາຍຮັບຈາກການລ້ຽງປານິນຂາຍ ປີໜຶ່ງ 200 ລ້ານກວ່າກີບ

ປັດຈຸບັນການຕອບສະໜອງ ຊີ້ນ, ໄຂ່, ປາ, ພືດຜັກ ອາຫານບໍລິໂພກເປັນປັດໄຈຫຼັກໃນການດໍາລົງຊີວິດທີ່ນັບມື້ນັບຫຼາຍຂຶ້ນ ແລະ ຂາດບໍ່ໄດ້, ເຊິ່ງລາຄາກໍ່ມີແນວໂນ້ມສູງຂຶ້ນຈາກຫຼາຍປັດໄຈດ້ານເສດຖະກິດ, ຢ່າງໃດກໍ່ຕາມໃນການຜະລິດພາຍໃນຖ້າຕອບສະໜອງຄວາມຕ້ອງການຂອງສັງຄົມໄດ້ລາຄາກໍ່ຈະບໍ່ສູງຫຼາຍ ແລະ ມີຄວາມປອດໄພກ່ວາການນໍາເຂົ້າ, ເຈົ້າຂອງຟາມປາວຽງພູຄາ ທ່ານ ຈອມແສງ ແກ້ວວົງເພັດ ປະຊາຊົນ ບ້ານວຽງໃຕ້, ເມືອງຫຼວງນໍ້າທາ ເປັນອີກທ່ານໜຶ່ງມີຄວາມຕັດສິນໃຈສູງຢືນຢັດໃນການຜະລິດປາຊີ້ນເພື່ອສະໜອງຕະຫຼາດໃນການບໍລິໂພກ ພາຍໃນເມືອງ ວຽງພູຄາ, ແຂວງຫຼວງນໍ້າທາ ເຊິ່ງປີໜຶ່ງມີລາຍຮັບສຸດທິຈາກ ໜອງປາ 6 ໜອງ ເນື້ອທີ່ 9.000 ກວ່າຕາແມັດ ມີລາຍຮັບ 200 ລ້ານກວ່າກີບ. ໄດ້ສໍາພາດໃຫ້ທີມງານຂ່າວສານ, ກະສິກໍາ ແລະ ປ່າໄມ້ ຮູ້ວ່າ: ໃນແຕ່ກ່ອນຕົນເອງເປັນພະນັກງານໂຄງການບໍ່ໄດ້ມີປະສົບການປູການລ້ຽງຫຍັງຫຼາຍ, ແຕ່ອາໄສວ່າເຮັດວຽກນໍາໂຄງການທີ່ໄປພັດທະນາສິ່ງເສີມຢູ່ຕ່າງແຂວງແລ້ວຕົນເອງໄດ້ມີໂອກາດໄປເຫັນຕົວຈິງ ຕໍ່ມາເລີຍມີແນວຄວາມຄິດຢາກປູກຢາກລ້ຽງເກີດຄວາມສົນໃຈ, ມັກຮັກ ທັງໄດ້ຍິນການໂຄສະນາພັກລັດເຮົາກໍ່ເອົາໃຈໃສ່ສິ່ງເສີມ ຫຼັງໂຄງການໝົດເລີຍຕັດສິນໃຈກັບຄອບຄົວມາສ້າງຟາມລ້ຽງປາຢູ່ເມືອງ ວຽງພູຄາ ແຂວງຫຼວງ







ນ້ຳທາ, ໂດຍໄດ້ລິເລີ່ມບຸກເບີກພື້ນທີໃນ ປີ 2020 ເປັນຕົ້ນມາ, ເບື້ອງຕົ້ນກໍ່ມີຄວາມຫຍຸ້ງຍາກເພາະມີທຶນບໍ່ຫຼາຍໂດຍໄດ້ໃຊ້ທຶນຕົນເອງໃນການບຸກເບີກ ແລະ ໄດ້ທຶນສົມທົບຊ່ວຍເຫຼືອຈາກ ເອດີບີ ຈຳນວນໜຶ່ງສົມທົບກັນ ໄລຍະປີທຳອິດແມ່ນຫຍຸ້ງຍາກຍ້ອນປະສົບການໜ້ອຍ ຫຼັງຈາກຜ່ານມາປີ 2-3 ປັດຈຸບັນແມ່ນມີຄວາມເຂົ້າໃຈຫຼາຍໃນການລ້ຽງປາ ບວກໃສ່ການປະສານສົມທົບກັບໜ່ວຍງານລ້ຽງສັດຂອງເມືອງທີ່ເພິ່ນມາໃກ້ຊິດ, ຕິດຕາມປະຈຳ, ເຖິງວ່າຈະມີຄວາມຫຍຸ້ງຍາກແນ່ແຕ່ຜົນໄດ້ຮັບຕັ້ງແຕ່ປີທຳອິດກໍ່ສາມາດໄດ້ທຶນຄືນຈາກຜົນຜະລິດປາຊີ້ນທີ່ສົ່ງຂາຍຕະຫຼາດ ແລະ ໃຊ້ເປັນທຶນໝູນວຽນໃນການຜະລິດ

ປັດຈຸບັນຟາມປາວຽງພູຄາ ໄດ້ສະໜອງປາໃຫ້ພາຍໃນເມືອງໄດ້ປີໜຶ່ງ 20 ກວ່າໂຕນ ໂດຍສະໜອງໃຫ້ຕະຫຼາດພາຍໃນເມືອງວຽງພູຄາ ເຊິ່ງໄດ້ສ້າງລາຍຮັບແກ່ຄອບຄົວ, ໃນປີໜຶ່ງສາມາດລ້ຽງປານິນໄດ້ 2 ຊຸດ, ດ້ານການລົງທຶນຊຸດໜຶ່ງຊື້ລູກປານ້ອຍມາປ່ອຍປະມານ 40-50 ພັນໂຕ ມູນຄ່າ 20 ລ້ານກວ່າກີບ, ໃນເນື້ອທີ 6 ໜອງ ໃຊ້ຫົວອາຫານຕໍ່ໜອງປະມານ 3-4 ໂຕນ, ອາຫານ 1 ໂຕນປະມານ 15 ລ້ານ, ລົງທຶນລວມທັງໝົດປະມານ 800 ລ້ານກວ່າກີບ, ໃນຊຸດໜຶ່ງລ້ຽງປະມານ 5-6 ເດືອນແມ່ນຂາຍໄດ້ປະມານ 10 ກວ່າໂຕນ ລາຄາຂາຍສົ່ງໃຫ້ຕະຫຼາດໃນລາຄາ 36.000 ກີບຕໍ່ກິໂລກຼາມ, ຫັກຕົ້ນ

ທຶນຄ່າໃຊ້ຈ່າຍສິ້ນເປືອງທັງໝົດຕ່າງໆ ມີກຳໄລງວດໜຶ່ງ 100 ກວ່າລ້ານຢ່າງຕ່ຳ, ລວມປີໜຶ່ງໄດ້ປະມານ 200 ກວ່າລ້ານ ເຊິ່ງກຳໄລຈະຫຼຸດ ຫຼື ເພີ່ມຂຶ້ນກັບການເນັ່ງຕຶງຂອງຄ່າທີ່ວອາຫານ. ໂດຍແຮງງານໃນການຈັດການຢູ່ຟາມລ້ຽງປາມີທັງໝົດ 4 ຄົນ ທີ່ເຮັດວຽກເບິ່ງແຍງຢູ່ໃນຟາມປາ ນອກນີ້ໃນບໍລິເວນຟາມນອກຈາກເຮັດໜອງປາ ທ່ານ ຈອມແສງ ແກ້ວວົງເພັດ ຍັງໄດ້ລ້ຽງແບ້ ແລະ ໄກ່ຕື່ມອີກໂດຍການໃຊ້ກຳໄລ່ຈາກການລ້ຽງປາ

ທ່ານ ຈອມແສງ ແກ້ວວົງເພັດ ຍັງກ່າວຕື່ມອີກວ່າປັດຈຸບັນລູກປາ ແລະ ທີ່ວອາຫານແມ່ນຊື້ຈາກການນຳເຂົ້າ ເຮັດໃຫ້ມີຕົ້ນທຶນສູງ, ຈາກບົດຮຽນການລົງທຶນລ້ຽງປາແມ່ນເຫັນວ່າມີຕົ້ນທຶນທີ່ຂ້ອນຂ້າງສູງ ແຕ່ມີຜົນກຳໄລດີສ້າງລາຍຮັບໃຫ້ຄອບຄົວ ໃນດ້ານການລ້ຽງປານິນກໍ່ບໍ່ຄ່ອຍຫຍຸ້ງຍາກຫຍັງຫຼາຍ ສຳລັບທ່ານໃດທີ່ມີຄວາມສົນໃຈຢາກແລກປ່ຽນບົດຮຽນປະສົບການ ກໍ່ສາມາດມາຢ້ຽມຢາມປຶກສາຫາລືນຳຟາມໄດ້ ຟາມປາວຽງພູຄາແມ່ນຍິນດີຕ້ອນຮັບ ຫຼື ພໍ່ຄ້າຊາວຂາຍທີ່ຕ້ອງການຜົນຜະລິດປາ, ສາມາດຕິດຕໍ່ສອບຖາມນຳຟາມໄດ້ ທີ່ເບີໂທຕິດຕໍ່ 020 9979 7699 ທ່ານ ຈອມແສງ ແກ້ວວົງເພັດ ຟາມປາວຽງພູຄາ, ແຂວງ ຫຼວງນ້ຳທາ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;